**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 154 /ສພຊ.ຊຍ

ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2024, ຜົນການກວດກາຕາມຜົນການກວດສອບ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງອົງການກວດກາລັດແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020.
- ອີງຕາມ ບົດລາຍງານຂອງອົງການກວດກາລັດແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II, ສະບັບເລກທີ 687/ອກລຂ, ລົງວັນທີ 23 ທັນວາ 2024.

ຜ່ານການປະກອບຄຳເຫັນ, ຄົ້ນຄວ້າ, ພິຈາລະນາຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2024, ຜົນການກວດກາຕາມຜົນການກວດສອບ ປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງອົງການກວດກາລັດແຂວງ. ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2024.**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາລັດແຂວງ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງຕົນ ໃນເງື່ອນໄຂສະພາບຫຍຸ້ງຍາກທາງດ້ານເສດຖະກິດການເງິນ ແຕ່ກໍ່ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ກວດກາໂຄງການລົງທຶນຂອງລັດ ຕາມແຈ້ງການຂອງສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 130/ຫສນຍ, ສຳເລັດໂດຍພື້ນຖານ ຈຳນວນ 165 ໂຄງການ ມູນຄ່າ 495,256 ຕື້ກີບ, ຜ່ານການກວດກາພົບເຫັນໂຄງການທີ່ຈັດຕັ້ງປະຕິບັດ ບໍ່ສອດຄ່ອງຕາມລະບຽບການ ຈຳນວນ 49 ໂຄງການ, ຕິດຕາມ-ກວດກາຊຸກຍູ້ ຄະນະປະສານງານຂັ້ນແຂວງ ແກ້ໄຂຜົນຂອງການກວດສອບ ຕາມມາດຕະການ ແລະ ການແນະນຳຂອງອົງການກວດສອບປະຈຳພາກເໜືອ 1, ຕາມມະຕິສະພາປະຊາຊົນແຂວງ ສະບັບເລກທີ 05/ສພຊ.ຊຍ, ລົງວັນທີ 13 ມັງກອນ 2024 ຈຳນວນ 24 ກໍລະນີ, ໃນນີ້: ໄດ້ຮັບການປັບປຸງແກ້ໄຂຂາດຕົວມີ 5 ກໍລະນີຄື: ກໍລະນີທີ່ຍົກມາແຕ່ສົກປີ 2015-2016 ມີ 1 ກໍລະນີ, ປີ



ສະແກນດ້ວຍ CamScanner

2017 ມີ 1 ກໍລະນີ, ປີ 2018 ມີ 1 ກໍລະນີ, ປີ 2021 ມີ 1 ກໍລະນີ ແລະ ປີ 2022 ມີ 1 ກໍລະນີ; ບັນຫາທີ່ໄດ້ປັບປຸງແກ້ໄຂແຕ່ຍັງບໍ່ທັນຂາດຕົວມີ 13 ກໍລະນີ ແລະ ບໍ່ໄດ້ຮັບການປັບປຸງແກ້ໄຂມີ 6 ກໍລະນີ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2025.**

ກອງປະຊຸມ ເຫັນດີເປັນເອກະພາບ ຕໍ່ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2025 ຂອງອົງການກວດກາລັດແຂວງ ເປັນຕົ້ນ: ກໍລະນີທີ່ຍັງຄ້າງແກ່ຍາວມາຮອດປີ 2022 ມີ 19 ກໍລະນີ ແລະ ກໍລະນີເກີດຂຶ້ນໃໝ່ມີ 9 ກໍລະນີ ທີ່ຈະໄດ້ຮັບການຊຸກຍູ້ ປັບປຸງແກ້ໄຂໃຫ້ຂາດຕົວໃນຕໍ່ໜ້າທັງໝົດມີ ຈໍານວນ 28 ກໍລະນີ; ໃນນັ້ນ: ກໍລະນີທີ່ຍົກມາແຕ່ສົກປີ 2015-2016 ທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂມີ 5 ກໍລະນີ, ປີ 2018 ມີ 2 ກໍລະນີ, ປີ 2019 ມີ 1 ກໍລະນີ, ປີ 2020 ມີ 1 ກໍລະນີ, ປີ 2021 ມີ 6 ກໍລະນີ ແລະ ປີ 2022 ມີ 4 ກໍລະນີ ແລະ ກໍລະນີທີ່ກວດສອບພົບເຫັນໃໝ່ ໃນປີ 2023 ມີ 9 ກໍລະນີຄື: (1). ການຄຸ້ມຄອງພະນັກງານປະລະໜ້າທີ່ ຖືກວິໄນ ແລະ ເສຍຊີວິດ ຂອງພະນັກງານລັດຖະກອນ, (2). ການປະຕິບັດລາຍຈ່າຍເງິນເກີນແຜນຂອງແຂວງ (3). ການຄຸ້ມຄອງລາຍຮັບພັດທະນາຊຸມຊົນ, (4). ການຄຸ້ມຄອງການຂຶ້ນທະບຽນວິສາຫະກິດ, (5). ການຈັດຕັ້ງປະຕບັດໂຄງການລົງທຶນຂອງລັດ, (6). ການຄຸ້ມຄອງໂຄງການສຶກສາສໍາຫຼວດໄຟຟ້ານໍ້າຕົກຂະໜາດນ້ອຍ, (7). ການຂຶ້ນແຜນດັດແກ້ລາຍຮັບງົບປະມານປະຈໍາປີ, (8). ການສະຫຼຸບຕິດຕາມການຊໍາລະໂຄງການລົງທຶນຂອງລັດ, (9). ການວາງເງິນຄໍ້າປະກັນໂຄງການ.

ສືບຕໍ່ຊຸກຍູ້ຕິດຕາມການແກ້ຜົນຂອງການກວດກາໂຄງການມູນຄ່າ 10 ຕື້ກີບຂຶ້ນໄປ ແລະ 10 ຕື້ກີບລົງຕາມແຈ້ງການ ຂອງສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 130/ຫສນຍ, ລົງວັນທີ 22 ມັງກອນ 2019 ແລະ ຕາມມະຕິ 113/ສພຊ, ລົງວັນທີ 24 ພະຈິກ 2023 ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ.

**ມາດຕາ 3 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈໍາປີ 2025.**

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງອົງການກວດກາລັດແຂວງໃຫ້ໄດ້ຮັບຜົນສໍາເລັດ ຕາມຈຸດປະສົງ ແລະ ລະດັບຄາດໝາຍ, ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມດັ່ງນີ້:

1. **ມອບໃຫ້ອົງການປົກຄອງແຂວງ.**
   - 1.1 ນໍາພາ-ຊີ້ນໍາການປະຕິບັດແກ້ໄຂຜົນການກວດກາ ທີ່ມີຄວາມຄືບໜ້າໜ້ອຍ, ຊັກຊ້າ ແລະ ແກ່ຍາວ ໃຫ້ເປັນຮູບປະທໍາ, ກໍານົດການແກ້ໄຂຜົນການກວດກາເປັນເງື່ອນໄຂໜຶ່ງໃນການປະເມີນ ຜົນການແຂ່ງຂັນຮັກຊາດ ແລະ ພັດທະນາ, ເປັນມາດຕະຖານໃນການປະເມີນບຸກຂະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.
   - 1.2 ຊີ້ນໍາບັນດາເປົ້າໝາຍຖືກກວດກາຂັ້ນແຂວງ, ເມືອງ ເປັນເຈົ້າການປະສານສົມທົບ, ໃຫ້ການຮ່ວມມືກັບອົງການກວດກາລັດແຂວງ ໄຈ້ແຍກ ແລະ ສັງລວມຜົນການກວດກາ ມາຮອດປັດຈຸບັນ, ໄດ້ຮັບການແກ້ໄຂແລ້ວ ແລະ ຍັງຄ້າງ ແລ້ວລາຍງານໃຫ້ອົງການປົກຄອງແຂວງຄົ້ນຄວ້າ ແລະ ສະເໜີສະພາປະຊາຊົນແຂວງ ພິຈາລະນາ.
   - 1.3 ຈັດສັນງົບປະມານ ໃຫ້ໂຄງການທີ່ນອນໃນເປົ້າໝາຍ ການກວດກາທີ່ພົບເຫັນເປັນບຸລິມະສິດເພື່ອເຮັດໃຫ້ຜົນການກວດກາໄດ້ຮັບການແກ້ໄຂວ່ອງໄວຍິ່ງຂຶ້ນ.
   - 1.4 ສືບຕໍ່ຊີ້ນໍາ ບັນດາຂະແໜງການຂັ້ນແຂວງ, ເມືອງ, ໃຫ້ເພີ່ມຄວາມຮັບຜິດຊອບ ໃນການຮ່ວມມືປະສານສົມທົບ, ອໍານວຍຄວາມສະດວກ, ສະໜອງເອກະສານຂໍ້ມູນ ແລະ ເຂົ້າຮ່ວມວຽກງານກວດກາລັດແຂວງ, ຕັ້ງໜ້າແກ້ໄຂຜົນການກວດກາຕາມກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍຢ່າງເຂັ້ມງວດ.

1.5 ສະເໜີອົງການປົກຄອງແຂວງ ຄົ້ນຄວ້າງົບປະມານ ຈັດຊື້ວັດຖຸອຸປະກອນ ເຄື່ອງມືວິຊາສະເພາະ ແລະ ສິ່ງອໍານວຍຄວາມສະດວກຕ່າງໆທີ່ຈໍາເປັນ ໃຫ້ແກ່ອົງການກວດກາລັດແຂວງ ເພື່ອໃຫ້ຮັບປະກັນໃນການຈັດຕັ້ງປະບັດວຽກງານກວດກາລັດໃຫ້ມີຜົນສໍາເລັດ

**2. ມອບໃຫ້ອົງການກວດກາລັດແຂວງ.**

2.1 ສືບຕໍ່ເອົາໃຈໃສ່ການແກ້ໄຂຜົນຂອງການກວດກາ ຕາມຜົນການກວດສອບ ທັງໝົດໃນ ຈໍານວນ 28 ກໍລະນີ, ໃນນີ້ ກໍລະນີທີ່ຍັງຄ້າງໃນໄລຍະຜ່ານມາ ຈໍານວນ 19 ກໍລະນີ ແລະ ເກີດຂຶ້ນໃໝ່ໃນປີ 2023 ຈໍານວນ 9 ກໍລະນີ ໃຫ້ບັນລຸຕາມແຜນການ.

2.2 ສືບຕໍ່ຕິດຕາມກວດກາ, ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຂະແໜງການຂັ້ນແຂວງ ເມືອງ ການປະຕິບັດມະຕິ, ຄໍາສັ່ງ, ລະບຽບກົດໝາຍ, ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໂຄງການກໍ່ສ້າງພື້ນຖານໂຄງລ່າງ, ການຈັດຕັ້ງປະຕິບັດໂຄງການທີ່ສະພາອະນຸມັດມາຈັດຕັ້ງປະຕິບັດຢູ່ແຂວງ ໄຊຍະບູລີ ແລະ ບັນດາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນການຄຸ້ມຄອງບໍລິຫານລັດ.

2.3 ເພີ່ມທະວີວຽກງານການໂຄສະນາ, ເຜີຍແຜ່, ການຈັດຕັ້ງປະຕິບັດນະໂຍບາຍ, ມະຕິ, ຄໍາສັ່ງກົດລະບຽບພັກ-ລັດ ແລະ ນິຕິກໍາກ່ຽວກັບວຽກງານກວດກາ ໃຫ້ສະມາຊິກພັກ-ພະນັກງານ ໄດ້ຮັບຮູ້ ແລະ ເຂົ້າໃຈ ໃຫ້ທົ່ວທຸກເປົ້າໝາຍ.

**ມາດຕາ 4 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນໍາບັນດາພະແນການ, ອົງການອ້ອມຂ້າງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ ອົງການກວດກາລັດແຂວງ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ.
3. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ບັນດາຄະນະກໍາມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ.**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄໍາພັນເພັງ



ສະແກນດ້ວຍ CamScanner